ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 1173/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 26/04/2023

ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ,

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງ ວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິ ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ວັນທີ 25 ເມສາ 2023, ດັ່ງມີລາຍລະອຽດລຸ່ມນີ້:

ວາລະທີ 1. ຮັບຊາບກ່ຽວກັບການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ.

ວາລະທີ 2. ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2023, ປະຊຸມເມື່ອວັນທີ 30 ມັງກອນ 2023. ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.522.485.154 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ ເຂົ້າຮ່ວມກອງປະຊຸມ.**

ວາລະທີ 3. ອະນຸມັດລາຍງານການເງິນ 6 ເດືອນຕົ້ນປີ 2022 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2022. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງຂອງຈຳນວນ ສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.522.485.154 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4. ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2022 ລວມທັງລາຍງານການເງິນຂອງ ບໍລິສັດ ປີ 2022, ແຜນການດຳເນີນທຸລະກິດຂອງບໍລິສັດປີ 2023. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.522.485.154 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ ເຂົ້າຮ່ວມກອງປະຊຸມ.**

ວາລະທີ 5. ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2022 ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **26 ເມສາ 2023** ໃນອັດຕາ **50** ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ **83,96** ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ **24 ພຶດສະພາ 2023**. ກອງປະຊຸມໄດ້ມີມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.522.485.154 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 6. ອະນຸມັດການເພີ່ມຕົວຄູນດັດສະນີເງິນເດືອນພື້ນຖານ ຂອງພະນັກງານ ຜ-ຟຟລ ຂຶ້ນຕື່ມຈຳນວນ 12 ສ່ວນຮ້ອຍໃນສີກປີ 2023. ໂດຍເລີ່ມປະຕິບັດແຕ່ເດືອນ 05/2023 ເປັນຕົ້ນໄປ. ກອງປະຊຸມໄດ້ມີມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.522.485.154 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 7. ຮັບຮອງການແຕ່ງຕັ້ງປະທານສະພາບໍລິຫານ, ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ, ການແຕ່ງຕັ້ງຮອງປະທານສະພາບໍລິຫານ, ກຳມະການສະພາບໍລິຫານບາງທ່ານທີ່ຄົບອາຍຸການ, ການແຕ່ງຕັ້ງກຳມະການສະພາບໍລິຫານເພີ່ມ ແລະ ການກຳນົດອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ, ມີລາຍຊື່ລະອຽດດັ່ງລຸ່ມນີ້:

1. **ທ່ານ ສຸລິວັດ ສຸວັນນະຈຸມຄຳ** ຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ, ເປັນປະທານສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່;
2. **ທ່ານ ຈັນທະບຸນ ສຸກອາລຸນ** ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ ເປັນຮອງປະທານສະພາບໍລິຫານສືບຕໍ່ອີກວາລະໜຶ່ງ;
3. **ທ່ານ ປະສົມພັດ ຄຳຕັນ** ຮອງຫົວໜ້າກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ , ເປັນກຳມະການສະພາບໍລິຫານ ເພື່ອປ່ຽນແທນຜູ້ເກົ່າ ທີ່ໄປຮັບໜ້າທີ່ໃໝ່;
4. **ທ່ານ ພິງສະຫວັດ ເສນາພອນ** ປະທານສະພາບໍລິຫານບໍລິສັດ ພິງຊັບທະວິກໍ່ສ້າງ ຂົວທາງ ຈຳກັດຜູ້ດຽວ ເປັນກຳມະການສະພາບໍລິຫານ ສືບຕໍ່ອີກວາລະໜຶ່ງ;
5. **ທ່ານ ສົມລັດ ເມກອາກາດ** ຜູ້ອຳນວຍການບໍລິສັດ ພິງຊັບທະວິກໍ່ສ້າງ ຂົວທາງ ຈຳກັດຜູ້ດຽວ ເປັນກາມະການສະພາບໍລິຫານ ສືບຕໍ່ອີກວາລະໜຶ່ງ;
6. **ທ່ານ ສຸກສະຫວາດ ໂສສຸພັນ** ຮອງຜູ້ອຳນວຍການໃຫຍ່ລັດວິສາຫະກິດໄຟຟ້າລາວ ເປັນກາມະການສະພາບໍລິຫານຜູ້ໃໝ່.

ກຳນົດລາຍຊື່ຜູ້ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດ ດັ່ງນີ້:

1. ປະທານສະພາບໍລິຫານ ຫລື ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ລົງລາຍເຊັນ ແລະ ປະທັບກາບໍລິສັດແຕ່ພຽງຜູ້ດຽວ; ຫລື
2. ໃຫ້ກຳມະການທ່ານອື່ນສອງທ່ານ ລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານທັງໝົດບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ເປັນຕົ້ນໄປ. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.522.485.154 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 8: ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ ໂດຍມີລາຍລະອຽດດັ່ງນີ້:

1) **<u>ດັດແກ້ມາດຕາ 9 ວ່າດ້ວຍກຳມະການ:</u>** ປ່ຽນຊື່ ແລະ ຂໍ້ມູນຂອງສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນ ສະພາບໍລິຫານຜູ້ເກົ່າຄື:

ກ. ຜູ້ຖືຮຸ້ນເປັນກຳມະການ:

1. ຊື່ ແລະ ນາມສະກຸນ: ທ່ານ ສຸລິວັດ ສຸວັນນະຈູມຄຳ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 185, ໜ່ວຍ 12, ບ້ານ ໂພນສະຫວັນໃຕ້, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ.
2. ຊື່ ແລະ ນາມສະກຸນ: ທ່ານ ປະສົມພັດ ຄຳຕັນ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 110, ໜ່ວຍ 07, ບ້ານ ວັດນາກ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ.
3. ຊື່ ແລະ ນາມສະກຸນ: ທ່ານ ສຸກສະຫວາດ ໂສສຸພັນ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ໜ່ວຍ 59, ບ້ານ ເມືອງນ້ອຍ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ.

2) **<u>ດັດແກ້ມາດຕາ 12 ວ່າດ້ວຍສະພາບໍລິຫານ:</u>** ຂໍ້ມູນຂອງສະພາບໍລິຫານຜູ້ໃໝ່ຄື:

1. ປະທານສະພາບໍລິຫານ ຊື່ ແລະ ນາມສະກຸນ: ທ່ານ ສຸລິວັດ ສຸວັນນະຈູມຄຳ
2. ຮອງປະທານສະພາບໍລິຫານ ຊື່ ແລະ ນາມສະກຸນ: ທ່ານ ຈັນທະບູນ ສຸກອາລຸນ

ສະພາບໍລິຫານ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ປັດຈຸບັນທັງໝົດມີ 12 ທ່ານ.

ແລະ ມອບອຳນາດໃຫ້ ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກ ບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫລາຍກວ່າ 80 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ, ດັ່ງນີ້:

(ກ) ຈຳນວນຄົນຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. **ເຫັນດີ 117 ຄົນ ເທົ່າກັບ 100 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.**

(ຂ) ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 1.522.485.154 ຮຸ້ນ (ສຽງ), ເທົ່າກັບ 90,661693 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ,

ຮອງປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ຈັນທະບູນ ສຸກອາລຸນ